ເອກະສານລາຍງານການເງິນປະຈຳໄຕມາດ 1
ສິ້ນສຸດ 31 ມີນາ 2025



ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
Souvanny Home Center Public Company

ສາລະບານ

I. ໃບສະຫຼຸບຊັບສິນບັດ 2-3

II. ໃບລາຍງານຜົນໄດ້ຮັບ (ສຳລັບໄຕມາດ 1) 4

III.ໃບລາຍງານສ່ວນປ່ຽນແປງທຶນຂອງຜູ້ຖືຮຸ້ນ..... 5

IV.ໃບລາຍງານ ກະແສເງິນສົດ.....6-7

1. ຂໍ້ມູນທົ່ວໄປ..... 8

2. ພື້ນຖານໃນການກະກຽມ 9

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ 10

4. ເງິນຝາກໄລຍະສັ້ນມີກຳນົດ 10

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ.....11

6. ສິນຄ້າໃນສາງ ສຸດທິ..... 12

7. ຊັບສິນໝຸນວຽນອື່ນໆ.....12

8. ທີ່ດິນ ແລະ ອຸປະກອນ, ສຸດທິ 13

9. ຊັບສິນຄົງທີ່ ບໍ່ມີຕົນຕົນ, ສຸດທິ..... 13

10. ຊັບສິນຄົງທີ່ ບໍ່ມີຕົນຕົນ, ສຸດທິ.....13

11. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ 14

12. ເງິນກູ້ຢືມຈາກສະຖາບັນການເງິນ.....14-15

13. ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້.....15-16

14. ສຳຮອງ 16

ສຳຮອງຕາມກົດໝາຍ 16

ສຳຮອງອື່ນໆ 16

15. ເງິນປັນຜົນ 16

16. ລາຍຈ່າຍອາກອນກຳໄລ..... 17

17. ກຳໄລຕໍ່ຮຸ້ນ 17

18. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ..... 17

18.1 ລາຍຮັບ ແລະ ລາຍຈ່າຍ 18

18.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ 18

18.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ 18

19. ລາຍຈ່າຍໃນການຂາຍ ແລະ ບໍລິຫານ 19

20. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສຳຄັນ 19

	ປີດ ອະທິບາຍ	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	38,919,940,948	18,620,031,453
ເງິນຝາກໄລຍະສັ້ນມີກຳນົດ	4	52,869,105,000	31,899,172,500
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	5	10,938,281,155	9,506,989,027
ເຄື່ອງໃນສາງ, ສຸດທິ	6	484,459,374,075	492,761,257,919
ຊັບສິນໝຸນວຽນອື່ນໆ	7	41,426,389,507	37,382,604,013
ລວມຊັບສິນໝຸນວຽນ		628,613,090,685	590,170,054,912
ຊັບສິນບໍ່ໝຸນວຽນ			
ຊັບສິນພວມຊື້ ແລະ ພວມກໍ່ສ້າງ		93,556,120,301	86,445,154,337
ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ	8	423,284,357,081	426,732,466,152
ຊັບສິນຄົງທີ່ ບໍ່ມີຕົວຕົນ, ສຸດທິ	9	701,325,825,228	698,577,813,801
ຊັບສິນບໍ່ໝຸນວຽນອື່ນໆ	10	13,981,320,090	14,202,483,420
ລວມຊັບສິນບໍ່ໝຸນວຽນ		1,232,147,622,700	1,225,957,917,711
ລວມຊັບສິນ		**1,860,760,713,385**	**1,816,127,972,622**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 08 ພຶດສະພາ 2025

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 08 ພຶດສະພາ 2025

	ບົດ ອະທິບາຍ	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ໜີ້ສິນ ແລະ ທຶນຕົນເອງ			
ໜີ້ສິນໝຸນວຽນ			
ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ	12	47,892,512,775	67,390,661,817
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ, ສຸດທິ	11	82,370,564,594	58,576,579,443
ສ່ວນທີ່ໝຸນວຽນ ຂອງເງິນກູ້ໄລຍະຍາວ	12	29,064,526,070	24,031,020,120
ໜີ້ຕ້ອງສົ່ງອາກອນກຳໄລ		14,946,245,053	11,293,089,759
ຮັບເງິນມັດຈຳຈາກລູກຄ້າ		4,918,150,703	4,342,244,971
ໜີ້ສິນໝຸນວຽນອື່ນໆ		13,953,143,447	19,728,450,938
ລວມໜີ້ສິນໝຸນວຽນ		193,145,142,642	185,362,047,048
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	12	48,685,846,688	35,347,370,505
ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້	13	65,546,320,500	66,233,252,250
ລວມໜີ້ສິນບໍ່ໝຸນວຽນ		114,232,167,188	101,580,622,755
ລວມໜີ້ສິນ		307,377,309,830	286,942,669,803
ທຶນຕົນເອງ			
ທຶນຈົດທະບຽນ			
ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2,000 ກີບ		330,000,000,000	330,000,000,000
ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2,000 ກີບ		330,000,000,000	330,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		24,735,724,722	24,735,724,722
ກຳໄລສະສົມ			
ເງິນສຳຮອງຕາມກົດໝາຍ	14	26,027,348,763	26,027,348,763
ເງິນສຳຮອງອື່ນໆ	14	25,777,348,763	25,777,348,763
ກຳໄລຖ້າແບ່ງປັນ		295,262,267,830	277,057,393,457
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		851,580,713,476	845,587,487,113
ລວມທຶນຕົນເອງ		1,553,383,403,555	1,529,185,302,819
ລວມໜີ້ສິນ ແລະ ທຶນຕົນເອງ		**1,860,760,713,385**	**1,816,127,972,622**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ອັດດາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 08 ພຶດສະພາ 2025

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 08 ພຶດສະພາ 2025

	ບິດ ອະທິບາຍ	31 ມີນາ 2025 ກີບ	31 ມີນາ 2024 ກີບ
ລາຍໄດ້ຈາກການຂາຍ		240,846,971,243	231,488,824,877
ຕົ້ນທຶນໃນການຂາຍ		(178,440,456,246)	(173,017,309,090)
ກຳໄລລວມຂັ້ນຕົ້ນ		**62,406,514,997**	**58,471,515,787**
ລາຍຮັບອື່ນໆ		889,187,579	747,440,997
ລາຍຈ່າຍໃນການຂາຍ		(24,403,392,282)	(21,954,920,282)
ລາຍຈ່າຍບໍລິຫານ		(15,794,296,767)	(12,059,425,709)
ລາຍຈ່າຍການເງິນ		(2,274,783,119)	(1,918,722,387)
ກຳໄລຈາກອັດຕາແລກປ່ຽນ ສຸດທິ		994,774,525	(836,048,115)
ກຳໄລ ກ່ອນຈ່າຍອາກອນກຳໄລ		**21,818,004,933**	**22,449,840,291**
ອາກອນກຳໄລ	16	(3,613,130,560)	(3,692,147,040)
ກຳໄລສຸດທິ		**18,204,874,373**	**18,757,693,251**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	17	110	114

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 08 ພຶດສະພາ 2025

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 08 ພຶດສະພາ 2025

	ຍັດ ອະທິບາຍ	ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສຳຮອງເງິນ ຕາມກົດໝາຍ ກີບ	ສຳຮອງເງິນ ອື່ນໆ ກີບ	ກຳໄລສະສົມ ຍັງບໍ່ທັນແບ່ງປັນ ກີບ	ຜົນຕ່າງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2024		330,000,000,000	24,735,724,722	20,181,970,566	19,931,970,566	250,094,367,876	869,765,106,550	1,514,709,140,280
ສຳຮອງເງິນຕາມກົດໝາຍ		-	-	-	-	-	-	-
ສຳຮອງເງິນອື່ນໆ		-	-	-	-	-	-	-
ກຳໄລສຸດທິ		-	-	-	-	18,757,693,251	-	18,757,693,251
ຈ່າຍເງິນປັນຜົນ		-	-	-	-	-	-	-
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	24,158,440,215	24,158,440,215
ຍອດເຫຼືອໃນວັນທີ 31 ມີນາ 2024		330,000,000,000	24,735,724,722	20,181,970,566	19,931,970,566	268,852,061,127	893,923,546,765	1,557,625,273,745
ຍອດຍົກມາ ວັນທີ 1 ມັງກອນ 2025		330,000,000,000	24,735,724,722	26,027,348,763	25,777,348,763	277,057,393,458	845,587,487,113	1,529,185,302,819
ສຳຮອງເງິນຕາມກົດໝາຍ		-	-	-	-	-	-	-
ສຳຮອງເງິນອື່ນໆ		-	-	-	-	-	-	-
ກຳໄລສຸດທິ		-	-	-	-	18,204,874,373	-	18,204,874,373
ຈ່າຍເງິນປັນຜົນ		-	-	-	-	-	-	-
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	5,993,226,363	5,993,226,363
ຍອດເຫຼືອໃນວັນທີ 31 ມີນາ 2025		330,000,000,000	24,735,724,722	26,027,348,763	25,777,348,763	295,262,267,831	851,580,713,476	1,553,383,403,555

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 08 ພຶດສະພາ 2025

ພັນໄນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 08 ພຶດສະພາ 2025

ຍັດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ໃບລາຍງານ ກະແສເງິນສົດ
ສຳລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2025

	ບົດອະທິບາຍ	31 ມີນາ 2025 ກີບ	31 ມີນາ 2024 ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລສຸດທິກ່ອນອາກອນກຳໄລ		21,818,004,933	22,449,840,291
ການດັດແກ້ຈາກ:			
ຄ່າຫຼ້ຍຫ້ຽນ		7,129,509,082	6,827,159,221
ຄ່າຕັດຈ່າຍ		-	-
ກຳໄລຈາກການຂາຍທີ່ດິນ, ສິ່ງປຸກສ້າງ ແລະ ອຸປະກອນ		71,012,051	5,174,793
ຂາດທຶນຈາກອັດຕາແລກປ່ຽນ		7,598,044,366	2,671,890,536
ລາຍຈ່າຍດອກເບ້ຍ		2,274,783,119	1,918,722,387
ສຳຮອງເຄື່ອງໃນສາງ		277,026,530	525,476,435
ສຳຮອງໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		1,545,527	(1,035,807,078)
ສຳຮອງໜີ້ຕ້ອງຮັບຈາກການຮັບຄືນສິນຄ້າ		(60,035,757)	1,162,860,867
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນ		39,109,889,852	34,525,317,451
ການປ່ຽນແປງຈາກ ການດຳເນີນງານຂອງຊັບສິນ ແລະ ໜີ້ສິນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(1,335,404,039)	(1,533,079,424)
- ເຄື່ອງໃນສາງ		9,963,243,476	467,578,671
- ຊັບສິນໝຸນວຽນອື່ນໆ		(3,619,700,733)	(12,397,548,953)
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		22,647,668,629	23,183,481,813
- ເງິນມັດຈຳຈາກລູກຄ້າ		558,824,544	(280,193,809)
- ໜີ້ສິນໝຸນວຽນອື່ນໆ		(5,838,041,826)	(7,159,291,765)
ກະແສເງິນສົດທີ່ເກີດຈາກການດຳເນີນງານ		61,486,479,903	36,806,263,985
ຈ່າຍດອກເບ້ຍ		(2,289,655,040)	(1,960,402,688)
ຈ່າຍອາກອນກຳໄລ		(8,600,000,000)	-
ເງິນສົດສຸດທິໃຊ້ໃນກິດຈະກຳໃນການດຳເນີນງານ		50,596,824,863	34,845,861,297
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:			
ການລົງທຶນໃນເງິນຝາກມີກຳນົດ		(20,969,932,500)	-
ຊື້ຊັບສິນບັດຄົງທີ່		(8,260,157,823)	(19,308,831,532)
ຊື້ຊອບແວຄອມພິວເຕີ		0	(37,719,913)
ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ		(29,230,090,323)	(19,346,551,445)

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ໃບລາຍງານ ກະແສເງິນສົດ
ສຳລັບ ໄຕມາດ 1 ສິ້ນສຸດ ວັນທີ 31 ມີນາ 2025

	ບິດ ອະທິບາຍ	31 ມີນາ 2025 ກີບ	31 ມີນາ 2024 ກີບ
ກະແສເງິນສົດຈາກກິດຈະກຳການເງິນ:			
ຮັບເງິນກູ້ຢືມຈາກທະນາຄານ		84,860,788,124	81,101,610,430
ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ		(86,391,097,966)	(87,410,838,478)
ຮັບເງິນກູ້ຢືມຈາກຮຸ້ນກູ້		-	-
ຈ່າຍເງິນປັນຜົນ		-	-
ເງິນສົດສຸດທິຈາກກິດຈະກຳທາງການເງິນ		(1,530,309,842)	(6,309,228,048)
ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		19,836,424,698	9,190,081,803
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ		18,620,031,453	97,622,510,973
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		463,484,797	(400,367,366)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**38,919,940,948**	**106,412,225,410**
ລາຍການບໍ່ແມ່ນເງິນສົດ			
ໜີ້ຕ້ອງສົ່ງອື່ນໆຈາກການຊື້ຊັບສິນຄົງທີ່		915,892,500	-
ໜີ້ຕ້ອງສົ່ງດອກເບ້ຍ		14,871,921	41,680,300

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 08 ພຶດສະພາ 2025

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 08 ພຶດສະພາ 2025

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 8 ເຖິງ 19 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

1 ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ("ບໍລິສັດ") ເປັນບໍລິສັດມະຫາຊົນທີ່ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບລາວ (ຕລຊ) ທີ່ ສ້າງຕັ້ງ ແລະ ດຳເນີນທຸລະກິດໃນ ສປປ ລາວ. ບໍລິສັດດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດ ສະບັບລ່າສຸດ ເລກທີ 3271/ຈວທ, ລົງວັນທີ 29 ສິງຫາ 2024. ກິດຈະກຳຕົ້ນຕໍຂອງບໍລິສັດແມ່ນດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດ ສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນ ເຊັ່ນ: ກະໂລ້, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານ ກໍ່ສ້າງ, ເຟີນິເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກ ແບບພາຍໃນຫ້ອງຄົວ-ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າ ເຖິງມືລູກຄ້າ.

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ບ້ານເລກທີ 366 ບ້ານໂພນຕ້ອງສະຫວາດ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດມີ 8 ສາຂາໃນ ສປປ ລາວ ໃນນັ້ນ 3 ສາຂາຕັ້ງຢູ່ທີ່ ນະຄອນຫຼວງວຽງຈັນ ແລະ 5 ສາຂາຕັ້ງຢູ່ທີ່ແຂວງອື່ນໆ ດັ່ງລາຍ ລະອຽດລຸ່ມນີ້:

- ສາຂາ ໂພນຕ້ອງສະຫວາດ ສະຖານທີ່ຕັ້ງຢູ່ບ້ານເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບຸລີ, ນະຄອນຫຼວງວຽງຈັນ;
- ສາຂາ ສີໄຄ ສະຖານທີ່ຕັ້ງຢູ່ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ໂຊກໃຫຍ່ ສະຖານທີ່ຕັ້ງຢູ່ຖະໜົນ 450 ປີ, ບ້ານ ໂຊກໃຫຍ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ;
- ສາຂາ ປາກຊັນ ສະຖານຕັ້ງຢູ່ຖະໜົນ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ;
- ສາຂາ ປາກເຊ ສະຖານທີ່ຕັ້ງຢູ່ ຖະໜົນເລກທີ 13, ບ້ານ ກາງ, ເມືອງ ນະຄອນປາກເຊ, ແຂວງ ຈຳປາສັກ;
- ສາຂາ ສະຫວັນນະເຂດ ສະຖານທີ່ຕັ້ງຢູ່ ຖະໜົນເລກ 9, ບ້ານ ໂພນສະຫວ່າງເໜືອ, ເມືອງ ໄກສອນ ພົມວິຫານ,
- ແຂວງ ສະຫວັນນະເຂດ;
- ສາຂາ ທ່າແຂກ ສະຖານທີ່ຕັ້ງຢູ່ ບ້ານ ໂພນພົມ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ;
- ສາຂາ ຫຼວງພະບາງ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ພອນໄຊ, ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ.

ພ້ອມນີ້, ບໍລິສັດກຳລັງມີ 3 ສາຂາ ທີ່ພວມກໍ່ສ້າງດັ່ງນີ້:

- ສາຂາ ສີມສະໜຸກ ສະຖານທີ່ຕັ້ງຢູ່ ຖະໜົນ T5, ບ້ານ ສີມສະໜຸກ, ເມືອງ ຫາດຊາຍຟອງ, ນະຄອນຫຼວງວຽງຈັນ;
- ສາຂາ ອຸດົມໄຊ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ນາສ້າວ, ເມືອງ ໄຊ, ແຂວງ ອຸດົມໄຊ;
- ສາຂາ ວັງວຽງ ສະຖານທີ່ຕັ້ງຢູ່ ຖະໜົນ 13 ເໜືອ, ບ້ານ ຂັນໝາກ, ເມືອງ ວັງວຽງ, ແຂວງ ວຽງຈັນ.

ເອກະສານລາຍງານການເງິນປະຈຳໄຕມາດ 1 ສະບັບນີ້ໄດ້ຜ່ານອະນຸມັດ ໂດຍຜູ້ອຳນວຍການ ໃນວັນທີ 8 ພຶດສະພາ 2025.

2 ພື້ນຖານໃນການກະກຽມ

2.1 ນະໂຍບາຍການບັນຊີ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນສະບັບນີ້ ເຊິ່ງໄດ້ມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍການບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ, ລວມທັງບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມເອກະສານລາຍງານການເງິນ. ອີງຕາມແຈ້ງການທາງລັດຖະການ ສະບັບເລກທີ 1137/ກງ, ລົງວັນທີ 27 ເມສາ 2020 ອອກໂດຍກະຊວງການເງິນ, ວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ ໄດ້ອະນຸຍາດໃຫ້ເລື່ອນເວລາການນຳໃຊ້ IFRS ໄປຈົນເຖິງວັນທີ 1 ມັງກອນ 2026. ເຊິ່ງຄະນະບໍລິຫານກາລັງກະກຽມການນຳໃຊ້ IFRS ອີງຕາມການແຈ້ງການດັ່ງກ່າວ.

2.2 ດຸນພິນິດ, ການຄາດຄະເນ ແລະ ການຕັ້ງສົມມຸດຖານທາງການບັນຊີທີ່ສຳຄັນ

ບໍລິສັດໄດ້ມີການຕັ້ງສົມມຸດຖານ ແລະ ການຄາດຄະເນໂດຍຄຳນຶງເຖິງເຫດການທີ່ຈະເກີດຂຶ້ນໃນອະນາຄົດ. ຜົນຂອງການຄາດຄະເນອາດຈະບໍ່ທຽບເທົ່າກັບຈຳນວນຕົວຈິງທີ່ຈະເກີດຂຶ້ນໃນອານາຄົດ. ການຄາດຄະເນ ແລະ ການຕັ້ງສົມມຸດຖານ ຈະມີຄວາມສ່ຽງທີ່ຕ້ອງເຮັດໃຫ້ມີການດັດແກ້ ສຳລັບຈຳນວນທີ່ຕັ້ງປະມານການໄວ້ຂອງຊັບສິນ ແລະ ໜີ້ສິນ ໃນປີການບັນຊີຕໍ່ໄປຈາກທີ່ເປີດເຜີຍເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ອາກອນ

ຄວາມບໍ່ແນ່ນອນໃນການຕີຄວາມຫມາຍຂອງລະບຽບການພາສີອາກອນທີ່ຊັບຊ້ອນ, ການປ່ຽນແປງກົດໝາຍພາສີອາກອນ, ແລະ ຈຳນວນ ແລະ ເວລາຂອງລາຍຮັບທຸລະກິດໃນອະນາຄົດ. ເນື່ອງຈາກລັກສະນະໄລຍະຍາວ ແລະ ຄວາມຊັບຊ້ອນຂອງສັນຍາທີ່ມີຢູ່ແລ້ວ, ຄວາມແຕກຕ່າງທີ່ເກີດຂຶ້ນລະຫວ່າງຜົນໄດ້ຮັບຕົວຈິງ ແລະ ການສົມມຸດຕິຖານທີ່ໄດ້ເຮັດ, ຫຼື ການປ່ຽນແປງໃນອະນາຄົດຂອງສົມມຸດຕິຖານດັ່ງກ່າວ, ອາດຈະຈຳເປັນຕ້ອງມີການດັດແກ້ໃນອະນາຄົດຕໍ່ລາຍຮັບທຸລະກິດ ແລະ ລາຍຈ່າຍທາງອາກອນທີ່ຖືກບັນທຶກໄວ້ແລ້ວ. ບໍລິສັດໄດ້ບັນທຶກເງິນແຮ ອີງໃສ່ການຕັ້ງປະມານການທີ່ສົມເຫດສົມຜົນ ສຳລັບຜົນສະທ້ອນທີ່ເປັນໄປໄດ້ຂອງການກວດສອບໂດຍກົມພາສີ-ອາກອນຂອງ ສປປ ລາວ. ຈຳນວນປະມານການດັ່ງກ່າວ ແມ່ນອີງໃສ່ປັດໄຈຕ່າງໆ ເຊັ່ນ: ອີງຕາມການກວດສອບໂດຍກົມພາສີ-ອາກອນທີ່ຜ່ານມາ ແລະ ການຕີຄວາມໝາຍທີ່ແຕກຕ່າງກັນຂອງຫົວໜ່ວຍທຸລະກິດ ແລະ ກົມພາສີ-ອາກອນ ຜູ້ຮັບຜິດຊອບ. ຄວາມແຕກຕ່າງໃນການຕີຄວາມໝາຍດັ່ງກ່າວອາດເກີດຂຶ້ນໄດ້ກັບເງື່ອນໄຂທີ່ເປັນຢູ່ໃນ ສປປ ລາວ.

ຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບການຄ້າ

ບໍລິສັດໄດ້ກຳນົດສຳຮອງໜີ້ສົງໄສຈະສູນທີ່ສະທ້ອນໃຫ້ເຫັນເຖິງຄ່າເສື່ອມມູນຄ່າຂອງໜີ້ຕ້ອງຮັບຈາກການຄ້າ, ທີ່ກ່ຽວຂ້ອງກັບເງິນສຳຮອງຂາດທຶນຈາກການຮຽກເກັບເງິນກັບລູກຄ້າ. ການສຳຮອງໜີ້ສົງໄສຈະສູນເປັນຜົນມາຈາກການປະເມີນເງິນສົດທີ່ຄາດວ່າຈະໄດ້ຮັບໃນອະນາຄົດຂອງບໍລິສັດ ເຊິ່ງການປະເມີນການແມ່ນຢູ່ເທິງພື້ນຖານພິຈາລະນາປະສົບການທີ່ຜ່ານມາໃນການຮຽກເກັບເງິນຈາກລູກຄ້າ ແລະ ການຜິດນັດໃນການຊຳລະໜີ້ໂດຍຈະພິຈາລະນາຕາມແນວໂນ້ມຂອງຕະຫຼາດ.

ເງິນແຮສຳລັບການຫຼຸດລົງມູນຄ່າຂອງເຄື່ອງໃນສາງ

ບໍລິສັດໄດ້ປະເມີນການເງິນແຮສຳລັບການຫຼຸດລົງມູນຄ່າຂອງເຄື່ອງໃນສາງ ເພື່ອສະທ້ອນໃຫ້ເຫັນເຖິງມູນຄ່າສຸດທິຂອງເຄື່ອງໃນສາງ. ເງິນແຮສຳລັບການຫຼຸດລົງມູນຄ່າຂອງເຄື່ອງໃນສາງແມ່ນໄດ້ສະແດງການວິເຄາະຄວາມລ້າສະໄໝຂອງສິນຄ້າ ແລະ ການຄາດຄະການທີ່ກ່ຽວກັບການຂາຍສິນຄ້າໃນອະນາຄົດ. ຍອດເຫຼືອຂອງສິນຄ້າຄ້າງສາງ ແມ່ນຈະຖືກຕັດອອກທາງບັນຊີ ເມື່ອຮັບຮູ້ວ່າສິນຄ້າດັ່ງກ່າວແມ່ນໄດ້ລ້າສະໄໝ ຫຼື ບໍ່ສາມາດຂາຍໄດ້.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	31 ມີນາ 2025	31 ທັນວາ 2024
	ກີບ	ກີບ
ເງິນສົດໃນມື	503,263,569	684,574,488
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ	38,416,677,379	17,935,456,965
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	38,919,940,948	18,620,031,453

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງ ພາຍໃນປະເທດໃນ 4 ສະກຸນເງິນ ໂດລາສະຫະລັດ, ບາດ, ກີບ ແລະ ຢວນ ໃນບັນຊີກະແສລາຍວັນ.

4. ເງິນຝາກໄລຍະສັ້ນມີກຳນົດ

	31 ມີນາ 2025	31 ທັນວາ 2024
	ກີບ	ກີບ
ເງິນຝາກໄລຍະສັ້ນ	52,869,105,000	31,899,172,500

ນະວັນທີ 31 ມີນາ 2025, ເງິນຝາກມີກຳນົດກັບທະນາຄານພາຍໃນປະເທດປະກອບມີ ສັນຍາຝາກມີກຳນົດເປັນເງິນໂດລາ ໄລຍະ 3 ເດືອນ, 6 ເດືອນ ໃນອັດຕາດອກເບ້ຍລະຫວ່າງ 1.35% ເຖິງ 2.10% ຕໍ່ປີ.

5. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ໜີ້ຕ້ອງຮັບການຄ້າ	14,857,361,419	13,409,175,790
ຫັກ ໜີ້ສົງໄສຈະເສຍ	(3,919,080,264)	(3,902,186,763)
ໜີ້ຕ້ອງຮັບການຄ້າ ສຸດທິ	**10,938,281,155**	**9,506,989,027**

ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ມີນາ 2025 ມີອາຍຸການດັ່ງຕໍ່ນີ້:

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ບໍ່ຄົບກຳນົດ	7,793,673,818	7,950,921,596
ເກີນກຳນົດ		
1 - 3 ເດືອນ	2,728,791,373	1,489,591,946
3 - 6 ເດືອນ	416,738,743	66,475,485
6 - 12 ເດືອນ	66,837,028	-
ເກີນ 12 ເດືອນ	3,851,320,640	3,902,186,763
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ	**14,857,361,602**	**13,409,175,790**
ຫັກ ໜີ້ສົງໄສຈະເສຍ	(3,919,080,447)	(3,902,186,763)
ໜີ້ຕ້ອງຮັບການຄ້າ ສຸດທິ	**10,938,281,155**	**9,506,989,027**

ໜີ້ຕ້ອງຮັບການຄ້າທີ່ມີອາຍຸເກີນ 6 ເດືອນ ສ່ວນໃຫຍ່ເປັນໜີ້ຕ້ອງຮັບທີ່ຍັງຄົງມີການຊື້ຂາຍ ກັບບໍລິສັດຢ່າງຕໍ່ເນື່ອງ. ການຕັ້ງໜີ້ສົງໄສຈະເສຍສຳລັບຍອດໜີ້ຕ້ອງຮັບຄ້າງຊຳລະເກີນ 6 ເດືອນ ຫຼັງຈາກຄົບກຳນົດຊຳລະ ແລະ ໄດ້ຮັບການປະເມີນຈາກ ຜູ້ບໍລິຫານໃນເລື່ອງການຊຳລະຂອງບັນຊີໜີ້ຕ້ອງຮັບ ແລະ ຄາດຄະເນກ່ຽວກັບການເກັບເງິນຄືນຈາກໜີ້ຕ້ອງຮັບການຄ້າໃນອານາຄົດ. ຜູ້ບໍລິຫານເຊື່ອວ່າຈຳນວນເງິນນີ້ ມີແນວໂນ້ມສູງທີ່ຈະເກັບເງິນຄືນໄດ້ພາຍໃນເດືອນຕໍ່ໄປ.

6. ເຄື່ອງໃນສາງ, ສຸດທິ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ເຄື່ອງໃນສາງ	492,743,499,973	500,736,982,852
ຫັກ: ຫັກເງິນແຮສຳລັບສິນຄ້າທີ່ເຄື່ອນໄຫວຊ້າ ແລະ ລ້າສະໄໝ	(7,950,628,361)	(7,801,849,905)
ຫັກເງິນແຮສຳລັບມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ ("NRV")	(333,497,537)	(173,875,028)
ເຄື່ອງໃນສາງ, ສຸດທິ	**484,459,374,075**	**492,761,257,919**

ຜູ້ບໍລິຫານໄດ້ປະເມີນ ແລະ ທົບທວນຄືນການສຳຮອງເງິນແຮສຳລັບ ເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ, ເງິນແຮສຳລັບເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝໃນອະດີດ ແມ່ນໄດ້ດັດແກ້ໃຫ້ເພີ່ມຂຶ້ນເປັນຈຳນວນເງິນ 7,950 ລ້ານກີບ (ໃນປີ 2024: 7,801 ລ້ານກີບ) ເນື່ອງຈາກເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ສາມາດຂາຍໄດ້ຫລາຍຂຶ້ນ, ຜົນຈາກການປັບເພີ່ມ ດັ່ງກ່າວ ເຮັດໃຫ້ເງິນແຮ ແລະ ຕົ້ນທຶນຂາຍ ຖືກປັບໃຫ້ເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ການວິເຄາະຂ້າງເທິງ.

7. ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 31 ມີນາ 2025 ກີບ	ກວດສອບ 31 ທັນວາ 2024 ກີບ
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	7,257,662,587	5,706,649,338
ສ່ວນຫຼຸດຄ້າງຮັບຈາກຜູ້ສະໜອງສິນຄ້າ (i)	1,882,718,016	1,949,361,577
ເງິນຈ່າຍລ່ວງໜ້າຄ່າປະກັນໄພ	396,369,471	56,238,807
ເງິນຈ່າຍລ່ວງໜ້າຄ່າເຊົ່າ (ii)	20,972,042,435	27,747,965,086
ຊັບສິນໝຸນວຽນອື່ນໆ (iii)	10,917,596,998	1,922,389,205
ຊັບສິນໝຸນວຽນອື່ນໆ	41,426,389,507	37,382,604,013

(i) ສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງ ແມ່ນສ່ວນຫຼຸດການຄ້າຄ້າງຮັບຈາກຜູ້ສະໜອງທີ່ຈະມີການສະສາງໂດຍການຫັກລົບກັບໃບຮຽກເກັບເງິນເມື່ອບໍລິສັດມີການຊຳລະໃຫ້ກັບຜູ້ສະໜອງເຫຼົ່ານັ້ນ;

(ii) ຄ່າເຊົ່າຈ່າຍລ່ວງໜ້າປະກອບມີ (i) ໜີ້ສິນສັນຍາເຊົ່າຂອງທີ່ດິນຂອງສາຂາ ອຸດົມໄຊ, ສົມສະໜຸກ ແລະ ວັງວຽງ ທີ່ຢູ່ໃນຂັ້ນຕອນການກໍ່ສ້າງ ແລະ (ii) ໜີ້ສິນສັນຍາເຊົ່າຂອງອາຄານ ຂອງສາຂາ ໂພນຕ້ອງ, ໂຊກໃຫຍ່, ທ່າແຂກ, ສະຫວັນນະເຂດ, ປາກຊັນ, ປາກເຊ ແລະ ຫຼວງພະບາງ.

(iii) ຊັບສິນໝຸນວຽນອື່ນໆປະກອບມີ ອາກອນກຳໄລຈ່າຍລ່ວງໜ້າ, ຄ່າທຳນຽມອະນຸມັດເງິນກູ້, ຄ່າເຊົ່າຈ່າຍລ່ວງໜ້າ ເດີ່ນຈອດລົດສຳລັບພະນັກງານ, ຄ່າເຊົ່າຈ່າຍລ່ວງໜ້າທີ່ພັກສຳລັບພະນັກງານລະດັບສູງ ແລະ ລາຍຮັບດອກເບ້ຍຄ້າງຮັບ.

8. ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ຍອດຍົກມາສຸດທິໃນບັນຊີ	426,732,466,152	411,083,693,711
ຊື້ຊັບສິນເຂົ້າເພີ່ມ	2,065,084,359	49,392,310,065
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	1,687,327,703	(4,967,474,897)
ສະສາງອອກ	(71,012,051)	(67,035,118)
ຄ່າຫຼ້ຍຫ້ຽນ	(7,129,509,082)	(28,709,027,609)
ຍອດເຫຼືອມຸນຄ່າຕາມບັນຊີສຸດທິ	**423,284,357,081**	**426,732,466,152**

9. ຊັບສິນຄົງທີ່ ບໍ່ມີຕົນຕົນ, ສຸດທິ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ຍອດຍົກມາສຸດທິໃນບັນຊີ	**698,577,813,801**	**709,109,081,883**
ການເພີ່ມຂຶ້ນ	-	-
ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ	2,748,011,427	(10,531,268,082)
ຄ່າຫຼ້ຍຫ້ຽນ	-	-
ຍອດເຫຼືອມຸນຄ່າຕາມບັນຊີສຸດທິ	**701,325,825,228**	**698,577,813,801**

10. ຊັບສິນບໍ່ໝຸນວຽນອື່ນໆ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ຈ່າຍລ່ວງໜ້າສຳລັບຄ່າເຊົ່າອາຄານ	14,857,361,419	14,202,483,420

11. ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ໜີ້ຕ້ອງສິ່ງການຄ້າ– ພາກສ່ວນທີ່ກ່ຽວຂ້ອງ	11,658,840,289	7,894,769,326
ໜີ້ຕ້ອງສິ່ງການຄ້າ– ບຸກຄົນທີສາມ	69,946,597,691	49,613,158,267
ໜີ້ຕ້ອງສິ່ງອື່ນໆ	765,126,614	1,068,651,850
ໜີ້ຕ້ອງສິ່ງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ	**82,370,564,594**	**58,576,579,443**

12. ເງິນກູ້ຢືມຈາກສະຖາບັນການເງິນ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ໝຸນວຽນ		
ເງິນເບີກເກີນບັນຊີ	-	2,028,965,427
ເງິນກູ້ຢືມໄລຍະສັ້ນ	47,892,512,775	65,361,696,390
ສ່ວນທີ່ໝຸນວຽນຂອງເງິນກູ້ຢືມໃນໄລຍະຍາວ	29,064,526,070	24,031,020,120
ບໍ່ໝຸນວຽນ		
ເງິນກູ້ຢືມໃນໄລຍະຍາວ	48,685,846,688	35,347,370,505
ລວມເງິນກູ້ຢືມ	125,642,885,534	126,769,052,442

ຍອດຄົງເຫຼືອສັນຍາເບີກເງິນເກີນບັນຊີທະນາຄານ ນະວັນທີ 31 **ມີນາ** 2025 **ປະກອບມີ:**

i). ສັນຍາເບີກເງິນເກີນບັນຊີຈາກທະນາຄານທຸລະກິດພາຍໃນປະເທດ ວົງເງິນ 2,520,100,000 ກີບ ເຊິ່ງມີອັດຕາດອກເບ້ຍລາຍເດືອນເທົ່າກັບອັດຕາດອກເບ້ຍຂັ້ນພື້ນຖານຂອງປະເທດລາວ 1 ເດືອນ ບວກກັບ 3.874%. ການກູ້ຢືມດັ່ງກ່າວມີຫຼັກຊັບຄ້ຳປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

ii). ສັນຍາເບີກເງິນເກີນບັນຊີຈາກທະນາຄານທຸລະກິດພາຍໃນປະເທດ ວົງເງິນ 8,500,000 ບາດ ເຊິ່ງມີອັດຕາດອກເບ້ຍລາຍເດືອນເທົ່າກັບອັດຕາດອກເບ້ຍຂັ້ນພື້ນຖານຂອງປະເທດລາວ 1 ເດືອນ ບວກກັບ 4.695% ອັດຕາສ່ວນເພີ່ມຕໍ່ປີ. ການກູ້ຢືມດັ່ງກ່າວມີຫຼັກຊັບຄ້ຳປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

iii). ສັນຍາວົງເງິນກູ້ຮ່ວມຈາກທະນາຄານທຸລະກິດພາຍໃນປະເທດ ສຳລັບວົງເງິນຈຳນວນ 94,178 ລ້ານກີບ, ສັນຍາດັ່ງກ່າວປະກອບດ້ວຍ ໜັງສືຄ້ຳປະກັນ, (ການປະມູນ, ການຊື້ ແລະ ຜົນການດຳເນີນງານ), ໜັງສືສິນເຊື່ອ ແລະ ເອກະສານສິນເຊື່ອເພື່ອການນຳເຂົ້າ.

ຍອດຄົງເຫຼືອສັນຍາເງິນກູ້ໄລຍະສັ້ນ ນະວັນທີ 31 **ມີນາ** 2025 **ປະກອບມີ:**

iv). ສັນຍາວົງເງິນກູ້ໄລຍະສັ້ນຈາກທະນາຄານທຸລະກິດພາຍໃນປະເທດ ສຳລັບສັນຍາຈຳນວນ 30,000 ລ້ານກີບ ເຊິ່ງມີອັດຕາດອກເບ້ຍຄົງທີ່ປະຈຳປີເທົ່າກັບ 6.05%. ຕົ້ນທຶນເງິນກູ້ຈະຊຳລະເປັນໄຕມາດ ແລະ ດອກເບ້ຍຈະຊຳລະທຸກໆ ເດືອນ. ການກູ້ຢືມດັ່ງກ່າວມີຫຼັກຊັບຄ້ຳປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

v). ສັນຍາເງິນກູ້ແບບໝຸນວຽນຈາກທະນາຄານທຸລະກິດຕ່າງປະເທດ ສຳຫຼັບສັນຍາຈຳນວນ 250 ລ້ານບາດ ເຊິ່ງມີອັດຕາດອກເບ້ຍປະຈຳປີລະຫວ່າງ 4.60%- 4.85% ຕໍ່ປີ, ການເບີກເງິນກູ້ແຕ່ລະຄັ້ງແມ່ນກຳນົດໃຫ້ຊຳລະພາຍໃນ 150 ວັນຫຼັງຈາກວັນທີຖອນເງິນກູ້ ແລະ ດອກເບ້ຍຈະຕ້ອງຊຳລະທຸກໆ ເດືອນ. ການກູ້ຢືມມີຫຼັກຊັບຄ້ຳປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

ຍອດຄົງເຫຼືອສັນຍາເງິນກູ້ໄລຍະຍາວ 31 **ມີນາ** 2025 **ປະກອບມີ:**

vi). ສັນຍາເງິນກູ້ໄລຍະຍາວຈາກທະນາຄານທຸລະກິດພາຍໃນປະເທດຈຳນວນ 50 ລ້ານບາດ ເຊິ່ງມີອັດຕາດອກເບ້ຍຄົງທີ່ 5% ຕໍ່ປີ ໂດຍຈະຄົບກຳນົດໃນເດືອນມີນາ 2025. ຕົ້ນທຶນເງິນກູ້ຈະຊຳລະເປັນໄຕມາດ ແລະ ດອກເບ້ຍຈະຊຳລະທຸກໆ ເດືອນ.

vii). ສັນຍາເງິນກູ້ໄລຍະຍາວຈາກທະນາຄານທຸລະກິດພາຍໃນປະເທດຈຳນວນ 145 ລ້ານບາດ ເຊິ່ງມີອັດຕາດອກເບ້ຍຄົງທີ່ 6.05% ຕໍ່ປີ ແລະ ມີກຳນົດສິ້ນສຸດນະວັນທີ 31 ພຶດສະພາ 2027, ຕົ້ນທຶນເງິນກູ້ຈະຕ້ອງຊຳລະເປັນໄຕມາດ ແລະ ດອກເບ້ຍຈະຊຳລະທຸກໆ ເດືອນ ເລີ່ມແຕ່ວັນທີ 31 ສິງຫາ 2022 . ການກູ້ຢືມມີຫຼັກຊັບຄ້ຳປະກັນເປັນທີ່ດິນຂອງຜູ້ຖືຮຸ້ນ.

ຄ່າທຳນຽມບໍລິການທາງການເງິນຕັດຈ່າຍ ແມ່ນຮັບຮູ້ເປັນລາຍຈ່າຍລ່ວງໜ້າເມື່ອເກີດຂຶ້ນ ແລະ ຕັດຈ່າຍໂດຍວິທີຕາມອາຍຸຂອງສັນຍາ.

13. ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້

ບໍລິສັດໄດ້ອອກຮຸ້ນກູ້ ໂດຍມີເງື່ອນໄຂສຳຄັນດັ່ງລຸ່ມນີ້:

ຄຳອະທິບາຍ	ຂໍ້ມູນ
ປະເພດ	ຮຸ້ນກູ້ລະບຸຊື່ຜູ້ຖື ແບບບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ
ການຊຳລະ	ຊຳລະຄືນເງິນຕົ້ນເມື່ອຄົບກຳນົດ
ລາຄາສະເໜີຂາຍລວມ	50,000 ໂດລາ ສະຫະລັດ/ໜ່ວຍ, ທັງໝົດ 3,000,000 ໂດລາ ສະຫະລັດ
ຈຳນວນໜ່ວຍທັງໝົດ	60 ໜ່ວຍ
ອັດຕາດອກເບ້ຍ	7.5% (ຄົງທີ່) ຕໍ່ປີ
ການຈ່າຍດອກເບ້ຍ	ທຸກໆ 6 ເດືອນ (2 ຄັ້ງ/ປີ)
ອາຍຸ	4 ປີ
ວັນຄົບກຳນົດອາຍຸການໄຖ່ຖອນ	19 ພຶດສະພາ 2027

ຮຸ້ນກູ້ນະວັນທີ 31 ມີນາ 2025 ມີລາຍລະອຽດດັ່ງນີ້:

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ອອກຈຳໜ່າຍຮຸ້ນກູ້ຜ່ານ ຕະຫຼາດຫຼັກຊັບລາວ	65,546,320,500	66,233,252,250

14. ສຳຮອງ

ສຳຮອງຕາມກົດໝາຍ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ຍອດຍົກມາ	26,027,348,763	20,181,970,566
ການເພີ່ມຂຶ້ນ	-	5,845,378,197
ຍອດເຫຼືອທ້າຍ	**26,027,348,763**	**26,027,348,763**

ເງິນສຳຮອງຕາມກົດໝາຍໄດ້ກຳນົດຕາມ ມາດຕາທີ່ 156 ໃນກົດໝາຍວິສາຫະກິດ ຂອງ ສປປ ລາວ. ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງ ຂອງກຳໄລສຸດທິປະຈຳປີ ຖືກຕັ້ງໄວ້ເປັນສຳຮອງຕາມກົດໝາຍຈົນກ່ວາເງິນສຳຮອງດັ່ງກ່າວ ຈະ ຮອດ 50% ຂອງທຶນຈົດທະບຽນ.

ສຳຮອງອື່ນໆ.

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ. ໂດຍເປັນໄປຕາມນະໂຍບາຍຂອງ ທາງ ບໍລິສັດ ທີ່ໄດ້ຮັບການຈົດທະບຽນກັບ ກະຊວງການເງິນ ສປປ ລາວ ໃນວັນທີ 22 ກັນຍາ 2015. ເງິນສຳຮອງອື່ນໆ ແມ່ນກຳນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ ໄພພິບັດທາງທຳມະຊາດ, ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວ ໃນການຟື້ນຟູເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

15. ເງິນປັນຜົນ

ຈາກການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ໃນວັນທີ 10 ເມສາ 2025, ໄດ້ສະຫຼຸບວ່າ ຈະຈ່າຍເງິນປັນຜົນຈາກຜົນການ ດຳເນີນທຸລະກິດ ຂອງປີ 2024 ໃນອັດຕາ 120 ກີບ ຕໍ່ຮຸ້ນ (ປີ 2023: 120 ກີບ ຕໍ່ ຮຸ້ນ) ລວມເປັນເງິນປັນຜົນຕ້ອງຈ່າຍທັງ ໝົດ 19,800 ລ້ານກີບ (ປີ 2023: 19,800 ລ້ານກີບ) ເງິນປັນຜົນຖືກຈ່າຍໃຫ້ກັບຜູ້ຖືຮຸ້ນໃນວັນທີ 07 ພຶດສະພາ 2025.

16. ລາຍຈ່າຍອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນທີ່ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020. ບໍລິສັດຈະຕ້ອງຈ່າຍອາກອນກຳໄລ ເພື່ອໃຫ້ສອດຄ່ອງກັບກົດໝາຍທີ່ນຳໃຊ້ໃນອັດຕາ 20%.

ບໍລິສັດ ບໍ່ໄດ້ຮັບຮູ້ອາກອນລາຍໄດ້, ການຈ່າຍ ຫຼື ຮັບ ໃນອະນາຄົດສຳລັບຜົນແຕກຕ່າງຊົ່ວຄາວ. ອາກອນລາຍໄດ້ແມ່ນຮັບຮູ້ຕາມຜົນການດຳເນີນງານຂອງໄລຍະ ແລະ ອັດຕາອາກອນທີ່ກ່ຽວຂ້ອງ.

	31 ມີນາ 2025 ກີບ
ການສົມທຽບລະຫວ່າງອາກອນລາຍໄດ້ ແລະ ກຳໄລທາງບັນຊີ:	
ກຳໄລທາງບັນຊີກ່ອນອາກອນ	21,818,004,933
ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການສຳລັບອາກອນ (1)	(3,752,352,524)
ອາກອນລາຍໄດ້	18,065,652,800
ຄິດໄລ່ອາກອນ ໃນອັດຕາອາກອນ 20%	**3,613,130,560**

(1) ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການ ສຳລັບອາກອນສ່ວນໃຫຍ່ປະກອບມີ ຂາດທຶນທີ່ບໍ່ໄດ້ຮັບຮູ້ຈາກການປະເມີນຊັບສິນ, ໜີ້ສິນ ໃນສະກຸນເງິນຕາຕ່າງປະເທດໃນມື້ປິດບັນຊີ.

17. ກຳໄລຕໍ່ຮຸ້ນ

ໃນວັນທີ 31 ມີນາ 2025 ລາຍຮັບຕໍ່ຮຸ້ນຂັ້ນພື້ນຖານແມ່ນຄິດໄລ່ໂດຍການແບ່ງປັນກຳໄລສຸດທິຂອງຜູ້ຖືຮຸ້ນຂອງບໍລິສັດ ໂດຍຈຳນວນສະເລ່ຍນ້ຳໜັກຂອງຮຸ້ນສາມັນໃນລະຫວ່າງປີ.

ຕົວສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ(ຮຸ້ນ)	31 ມີນາ 2025 ກີບ	31 ມີນາ 2024 ກີບ
ກຳໄລສຸດທິສຳລັບໄລຍະທີ່ສາມາດຈ່າຍໃຫ້ຜູ້ຖືຮຸ້ນ (ກີບ)	18,204,874,373	18,757,693,251
ຕົວສະເລ່ຍຖ່ວງນ້ຳໜັກຮຸ້ນສາມັນ(ຮຸ້ນ)	165,000,000	165,000,000
ກຳໄລຕໍ່ຮຸ້ນ (ກີບ)	110	114

18. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງກັບການບໍລິຫານໃນບໍລິສັດ

ວິສາຫະກິດ ແລະ ບຸກຄົນ ໂດຍກົງ ຫລື ໂດຍທາງອ້ອມໂດຍຜ່ານໜຶ່ງ ຫຼື ຫຼາຍ ສື່ກາງ, ການຄວບຄຸມ ຫຼື ແມ່ນຄວບຄຸມໂດຍ ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປທີ່ມີ ບໍລິສັດ ລວມທັງ ບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດ ອື່ນໆທີ່ກ່ຽວຂ້ອງ ກິດຈະການຂອງ ບໍລິສັດ. ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ ໂດຍກົງ ຫຼື ທາງອ້ອມ, ມີສິດໃນການລົງຄະແນນສຽງຂອງ

ບໍລິສັດ ທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ, ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນເຫລົ່ານີ້ຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນໄຕມາດ 1 ສິ້ນສຸດວັນທີ 31 ມີນາ 2025 ທີ່ມີຄວາມສຳຄັນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

18.1 ລາຍຮັບ ແລະ ລາຍຈ່າຍ

	31 ມີນາ 2025 ກີບ	31 ມີນາ 2024 ກີບ
ຊື້ສິນຄ້າຈາກພາກສ່ວນທີ່ກ່ຽວຂ້ອງ	28,574,309,196	34,117,435,285
ຄ່າເຊົ່າຈ່າຍ	4,963,709,066	3,383,520,191
	33,538,018,262	**37,500,955,476**

18.2 ຍອດຄົງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ລ່ວງໜ້າຄ່າເຊົ່າ – ພາກສ່ວນທີ່ກ່ຽວຂ້ອງ	34,816,404,443	34,626,106,186
ໜີ້ຕ້ອງສົ່ງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ	11,658,840,289	8,014,207,869

18.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ

ຜູ້ບໍລິຫານຫຼັກລວມເຖິງຜູ້ອຳນວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສຳລັບການ ບໍລິການການຈ້າງງານແມ່ນດັ່ງຕໍ່ໄປນີ້:

	31 ມີນາ 2025 ກີບ	31 ມີນາ 2024 ກີບ
ສຳລັບ ໄຕມາດ 1	2,206,629,262	1,870,796,680

19. ລາຍຈ່າຍໃນການຂາຍ ແລະ ບໍລິຫານ

ບໍລິສັດໄດ້ມີຄ່າໃຊ້ຈ່າຍໃນການຂາຍ ແລະ ຄ່າໃຊ້ຈ່າຍບໍລິຫານເພີ້ມຂຶ້ນ ເນື່ອງຈາກວ່າບໍລິສັດໄດ້ມີການຂະຫຍາຍສາຂາໃໝ່, ເຮັດໃຫ້ຈຳນວນພະນັກງານກໍ່ເພີ່ມຂຶ້ນ ແລະ ຍັງມີຊັບສິນຖາວອນທີ່ເພີ່ມຂຶ້ນຕາມການຂະຫຍາຍສາຂາຈຶ່ງໄດ້ສິ່ງຜົນໃຫ້ມີຄ່າເຊື່ອມລາຄາເພີ່ມຂຶ້ນມາຕາມລຳດັບ.

20. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສຳຄັນ

ໃນຖານະຜູ້ເຊົ່າ

ບໍລິສັດໄດ້ເຊົ່າທີ່ດິນ ແລະ ຫ້ອງການ ພາຍໃຕ້ສັນຍາເຊົ່າການດຳເນີນງານທີ່ບໍ່ສາມາດຍົກເລີກໄດ້ຈາກຜູ້ຖືຮຸ້ນ. ອາຍຸສັນຍາເຊົ່າ ແມ່ນສອງຫາຫ້າປີເຄິ່ງ, ແລະ ສັນຍາເຊົ່າສ່ວນໃຫຍ່ແມ່ນສາມາດຕໍ່ອາຍຸສັນຍາໄດ້ ໃນຮອບເວລາສິ້ນສຸດຂອງສັນຍາຫຼັງຈາກການປະເມີນມູນຄ່າຄືນໃໝ່.

	31 ມີນາ 2025 ກີບ	31 ທັນວາ 2024 ກີບ
ບໍ່ເກີນ 1 ປີ	-	-
1 - 5 ປີ	37,300,608,024	41,548,442,288
ຍອດເຫຼືອທ້າຍ	**37,300,608,024**	**41,548,442,288**